ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0537 /ອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 04 ພຶດສະພາ 2018

# ຄຳແນະນຳ

## ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ຕິດພັນກັບການຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງຂອງນາຍົກ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງປີ 2013;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບປັບປຸງປີ 2016;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.

ເພື່ອຜັນຂະຫຍາຍເນື້ອໃນ ຈິດໃຈຄຳສັ່ງຊີ້ນຳຂອງຂັ້ນເທິງ ກ່ຽວກັບການເລັ່ງປັບປຸງ ແກ້ໄຂ ຄວາມຫຍຸ້ງຍາກ ທີ່ພົວພັນກັບຕົວຊີ້ວັດ "ການເລີ່ມຕົ້ນທຸລະກິດ" ໃຫ້ປະກົດຜົນເປັນຈິງ ຕາມຄາດໝາຍທີ່ວາງໄວ້ ເຮັດໃຫ້ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ) ມີລະບົບເອກະພາບ ໄດ້ຮັບການຈັດຕັ້ງປະຕິບັດເປັນມາດຖານດຽວກັນໃນຂອບເຂດທົ່ວປະເທດ ແລະ ເພື່ອໃຫ້ການຂຶ້ນທະບຽນສ້າງຕັ້ງວິສາຫະກິດຂອງຂະແໜງການອຸດສາຫະກຳ ແລະການຄ້າ ແລະການຂໍອະນຸຍາດລົງທຶນ ຫລືການຂໍອະນຸຍາດດຳເນີນທຸລະກິດຂອງຂະແໜງການກ່ຽວຂ້ອງ ມີຄວາມສະດວກ, ຕໍ່ເນື່ອງ, ວ່ອງໄວ ແລະ ສອດຄ່ອງກັນ ຕາມເນື້ອໃນ ຈິດໃຈ ຄຳສັ່ງດັ່ງກ່າວ ແນໃສ່ສ້າງບັນຍາກາດການປະກອບທຸລະກິດທີ່ເປັນມິດຕໍ່ການລົງທຶນ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດຂອງຊາດ.

**ລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ ດັ່ງນີ້:**

### ກ. ຫລັກການພື້ນຖານຂອງການເລີ່ມຕົ້ນທຸລະກິດ

ຫລັກການພື້ນຖານຂອງການເລີ່ມຕົ້ນທຸລະກິດ ຢູ່ ສປປ ລາວ ມີດັ່ງນີ້:

1. ທຸກການເຄື່ອນໄຫວທຸລະກິດ ຕ້ອງໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ໃຫ້ຖືກຕ້ອງ ຕາມບົດບັນຍັດ ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013, ເວັ້ນເສັຍແຕ່ການເຄື່ອນໄຫວໃນບາງທຸລະກິດ ທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ) ດັ່ງກ່າວນີ້ ແມ່ນບໍ່ໄດ້ບັງຄັບຈະການໃດໆ ໃສ່ຫລັງໃບທະບຽນວິສາຫະກິດ ຄືຜ່ານມາ.



Scanned with CamScanner

2. ຫລັງຈາກໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ຈາກຂະແໜງການອຸດສາຫະກຳ ແລະການຄ້າແລ້ວ ກ່ອນຈະເຄື່ອນໄຫວທຸລະກິດໃນກິດຈະການໃດໜຶ່ງນັ້ນ ວິສາຫະກິດທີ່ກ່ຽວຂ້ອງຕ້ອງໄດ້ຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການກ່ຽວຂ້ອງ ໃຫ້ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງຂອງຂະແໜງການ.

ການໄດ້ຮັບໃບອະນຸຍາດລົງທຶນ ຫລື ໃບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການກ່ຽວຂ້ອງດັ່ງກ່າວຈະເຮັດໃຫ້ວິສາຫະກິດສາມາດເຄື່ອນໄຫວທຸລະກິດໃນກິດຈະການ ຕາມທີ່ບົ່ງໄວ້ໃນໃບອະນຸຍາດນັ້ນໆ. ທຸກການເຄື່ອນໄຫວທຸລະກິດຂອງວິສາຫະກິດ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ຂ. ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ)**

**1. ການແບ່ງຂັ້ນຄຸ້ມຄອງການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ)**

1.1. ກົມທະບຽນ ແລະຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະການຄ້າ) ສາມາດຮັບຄຳຮ້ອງ ແລະຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ) ໃນທຸກປະເພດ, ຮູບການ, ຮູບແບບ ແລະ ສາຂາວິສາຫະກິດຕ່າງປະເທດ ບໍ່ວ່າຈະມີທີ່ຕັ້ງສຳນັກງານຢູ່ແຂວງໃດກໍໄດ້, ເວັ້ນເສັຍແຕ່ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ທີ່ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ຮັບຜິດຊອບ;

1.2. ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫລວງ ສາມາດຮັບຄຳຮ້ອງ ແລະຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນຫລືນິຕິບຸກຄົນ) ໃນທຸກປະເພດ, ຮູບການ, ຮູບແບບ ແລະສາຂາວິສາຫະກິດຕ່າງປະເທດທີ່ມີທີ່ຕັ້ງສຳນັກງານ ຢູ່ແຂວງ, ນະຄອນຫລວງຂອງຕົນ, ເວັ້ນເສັຍແຕ່ ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ທີ່ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ຮັບຜິດຊອບ;

1.3. ຫ້ອງການອຸດສາຫະກຳ ແລະການຄ້າ ຂັ້ນເມືອງ ສາມາດຮັບຄຳຮ້ອງ ແລະຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ທີ່ກ່ຽວກັບສະຫະກອນ ຕາມດຳລັດວ່າດ້ວຍສະຫະກອນ-ສະບັບປີ 2010, ປະເພດກິດຈະການ ຫລືວິສາຫະກິດສ່ວນບຸກຄົນ ທີ່ພະແນກອຸດສາຫະກຳແລະການຄ້າແຂວງ, ນະຄອນຫລວງ ມອບໝາຍໃຫ້ ແລະຕ້ອງມີທີ່ຕັ້ງສຳນັກງານ ຫລື ທີ່ຕັ້ງທຸລະກິດ ຢູ່ເມືອງຂອງຕົນ.

ໃນກໍລະນີ ໜັງສືແຈ້ງວັດຖຸປະສົງ ຂອງຜູ້ລົງທຶນ ຫາກມີກິດຈະການຄວບຂັ້ນຄຸ້ມຄອງລະຫວ່າງຂັ້ນເມືອງ ແລະຂັ້ນແຂວງ ແມ່ນໃຫ້ຜູ້ລົງທຶນຍື່ນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ນຳພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫລວງ ແຕ່ເວລາຂໍໃບອະນຸຍາດດຳເນີນທຸລະກິດ ຈຶ່ງຍື່ນຄຳຮ້ອງຂໍອະນຸຍາດ ນຳຂະແໜງການກ່ຽວຂ້ອງຂັ້ນເມືອງ ໃນກິດຈະການ ທີ່ຢູ່ໃນຂັ້ນຄຸ້ມຄອງຂອງເມືອງ.

**2. ສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ**

ສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ປະກອບດ້ວຍ:

- ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ຕາມຮູບການຮູບແບບວິສາຫະກິດ ທີ່ໄດ້ປະກາດໃຊ້ຜ່ານມາ;
- ໜັງສືແຈ້ງວັດຖຸປະສົງກ່ຽວກັບກິດຈະການ ຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດ.



Scanned with CamScanner

ໜັງສືແຈ້ງວັດຖຸປະສົງ ແມ່ນເອກະສານ ເພື່ອໃຊ້ເປັນບ່ອນອີງໃນການປະກອບໃນສຳນວນຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຫລືຂໍອະນຸຍາດດຳເນີນທຸລະກິດ ທັງເປັນບ່ອນອີງໃຫ້ຂະແໜງການກ່ຽວຂ້ອງ ໃນການລະບຸຊື່ກິດຈະການໃຫ້ສອດຄ່ອງ ເປັນເອກະພາບກັນ ໃນໃບອະນຸຍາດດັ່ງກ່າວ, ສ້າງຄວາມສະດວກ ໃຫ້ແກ່ການເກັບຮັກສາ ແລະການປ້ອນຂໍ້ມູນເຂົ້າໃນຖານຂໍ້ມູນວິສາຫະກິດ (ແບບຟອມໜັງສືແຈ້ງວັດຖຸປະສົງ ຄັດຕິດມາພ້ອມນີ້).

ວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ) ທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງມາກ່ອນແລ້ວ ຫາກຢາກດຳເນີນທຸລະກິດ ຫລືລົງທຶນໃນກິດຈະການໃດໜຶ່ງເພີ່ມເຕີມ ນອກຈາກທີ່ບົ່ງໄວ້ໃນໜັງສືແຈ້ງວັດຖຸປະສົງ ແມ່ນໃຫ້ຍື່ນຂໍອະນຸຍາດລົງທຶນ ຫລືອະນຸຍາດດຳເນີນທຸລະກິດໂດຍກົງ ຕໍ່ຂະແໜງການກ່ຽວຂ້ອງ ຫລືຫ້ອງການບໍລິການ ການລົງທຶນປະຕູດຽວ ຕາມຂັ້ນຕອນ, ເງື່ອນໄຂຂອງລະບຽບການທີ່ກ່ຽວຂ້ອງ ແລະຕ້ອງສົ່ງໃບອະນຸຍາດດັ່ງກ່າວ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ອອກທະບຽນວິສາຫະກິດໃຫ້ ພາຍໃນກຳນົດເວລາ ຕາມທີ່ບົ່ງໄວ້ໃນຂໍ້ 6 (ຄ) ຂອງຄຳແນະນຳສະບັບນີ້.

### 3. ການກວດສອບສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ

ພາຍຫລັງໄດ້ຮັບສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດແລ້ວ, ເຈົ້າໜ້າທີ່ທະບຽນວິສາຫະກິດສາມາດກວດສອບ ແລະໃຫ້ຄຳແນະນຳ ແຕ່ສະເພາະຂອບເຂດເນື້ອໃນ ຕາມຂັ້ນຕອນ ດັ່ງນີ້:

1) ແນະນຳຄວາມຄົບຖ້ວນ ແລະຄວາມຖືກຕ້ອງທົ່ວໄປຂອງການປະກອບຊຸດສຳນວນຄຳຮ້ອງ;

2) ກວດສອບ ແລະໃຫ້ຄຳແນະນຳດ້ານເນື້ອໃນ ທີ່ກ່ຽວກັບ:

- ຊື່ວິສາຫະກິດ (ຄວາມສອດຄ່ອງຂອງຊື່ ຕາມກົດໝາຍ);
- ທຶນຈົດທະບຽນວິສາຫະກິດ, ສັດສ່ວນການຖືຮຸ້ນ ຕາມກົດໝາຍແລະ ລະບຽບການ;
- ທີ່ຕັ້ງສຳນັກງານ ແລະ ເບີໂທຕິດຕໍ່ ຊຶ່ງອາດຈະເປັນທີ່ຕັ້ງສຳນັກງານຊົ່ວຄາວ ຫລື ຖາວອນກໍໄດ້. ໃນກໍລະນີແຈ້ງທີ່ຕັ້ງສຳນັກງານຊົ່ວຄາວ ແຕ່ພາຍຫລັງມາ ວິສາຫະກິດໄດ້ມີທີ່ຕັ້ງສຳນັກງານຖາວອນແລ້ວນັ້ນ ແມ່ນໃຫ້ສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດກ່ຽວກັບທີ່ຕັ້ງສຳນັກງານດັ່ງກ່າວ ໃຫ້ຖືກຕ້ອງ;
- ໜັງສືແຈ້ງວັດຖຸປະສົງຂອງວິສາຫະກິດ (ຄວາມສອດຄ່ອງຂອງແຕ່ລະກິດຈະການທຽບກັບເງື່ອນໄຂທີ່ລະບຽບກົດໝາຍກຳນົດໄວ້ ແລະ ທຽບກັບລາຍຊື່ກິດຈະການ ຕາມ LSIC);
- ສັນຊາດຂອງຜູ້ລົງທຶນ.

ສ່ວນການປະກອບເນື້ອໃນອື່ນໆ ຕາມແບບຟອມ ແມ່ນຂຶ້ນກັບການຕົກລົງ ແລະເປັນຄວາມຮັບຜິດຊອບຂອງຜູ້ລົງທຶນ ຕາມກົດໝາຍ ແລະລະບຽບການ.

ໃນຂັ້ນຕອນການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ຫ້າມບໍ່ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຮຽກຮ້ອງເອກະສານໃດໆ ເພີ່ມ ຫລື ລົງກວດກາ, ແຕ່ສາມາດລົງກວດກາ ຫລື ເຂົ້າຮ່ວມການກວດກາ ຕາມການສະເໜີຂອງຂະແໜງການກ່ຽວຂ້ອງ ພາຍຫລັງການຂຶ້ນທະບຽນສ້າງຕັ້ງວິສາຫະກິດແລ້ວ.

### 4. ກຳນົດເວລາໃນການອອກໃບທະບຽນວິສາຫະກິດ

ນັບແຕ່ວັນຮັບສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງອອກໃບທະບຽນວິສາຫະກິດ ແລະປະທັບຕາຮັບຮອງໜັງສືແຈ້ງວັດຖຸປະສົງ ມອບໃຫ້ແກ່ວິສາຫະກິດທີ່ກ່ຽວຂ້ອງ ໂດຍ



Scanned with CamScanner

ໄວ ແລະຊ້າສຸດບໍ່ໃຫ້ເກີນ ສິບວັນລັດຖະການ ຕາມທີ່ໄດ້ບົ່ງໄວ້ໃນວັກໜຶ່ງ ມາດຕາ 17(ປັບປຸງ)ຂອງກົດໝາຍວ່າດ້ວຍວິສາຫະກິດ.

**5. ການສ້າງຕັ້ງສາຂາ, ລັດວິສາຫະກິດ ແລະ ສະຫະກອນ**

ການສ້າງຕັ້ງສາຂາ, ລັດວິສາຫະກິດ ແລະສະຫະກອນ ແມ່ນໃຫ້ປະຕິບັດ ຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

**6. ຜູ້ມີສິດເຊັນໃບທະບຽນວິສາຫະກິດ**

ເພື່ອໃຫ້ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ມີຄວາມສະດວກ, ວ່ອງໄວ, ກົມທະບຽນ ແລະຄຸ້ມຄອງວິສາຫະກິດ, ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫລວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ຕ້ອງມອບໝາຍຜູ້ມີສິດເຊັນໃບທະບຽນວິສາຫະກິດ ຢ່າງໜ້ອຍ 2 ຄົນຂຶ້ນໄປ.

ຜູ້ມີສິດເຊັນໃບທະບຽນວິສາຫະກິດ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງເປັນເຈົ້າໜ້າທີ່ທະບຽນວິສາຫະກິດ ເທົ່ານັ້ນ ແລະ ການເຊັນໃບທະບຽນວິສາຫະກິດ ແມ່ນໃຫ້ປະຕິບັດຫລັກການເຊັນ ຕາມລະດັບບູລິມະສິດ ຖ້າລະດັບທີ່ໜຶ່ງບໍ່ຢູ່ ໃຫ້ລະດັບຖັດໄປ ເຊັນ. ຫ້າມບໍ່ໃຫ້ແກ່ຍາວເວລາຢ່າງເດັດຂາດ.

**ຄ. ການຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດ**

**1. ໄລຍະເວລາຍື່ນຂໍອະນຸຍາດລົງທຶນ ຫລືຂໍອະນຸຍາດດຳເນີນທຸລະກິດ ພາຍຫລັງຂຶ້ນທະບຽນວິສາຫະກິດ**

ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ເປັນຕົ້ນໄປ ວິສາຫະກິດທີ່ກ່ຽວຂ້ອງ ຕ້ອງໄປຍື່ນຂໍອະນຸຍາດດຳເນີນທຸລະກິດ ຫລືຂໍອະນຸຍາດລົງທຶນ ນຳຂະແໜງການກ່ຽວຂ້ອງ ໃນກິດຈະການໃດໜຶ່ງ ຕາມທີ່ໄດ້ລະບຸໄວ້ໃນໜັງສືແຈ້ງວັດຖຸປະສົງຂອງຕົນ.

ເມື່ອຄົບກຳນົດ ເກົ້າສິບວັນ ຫາກວິສາຫະກິດກ່ຽວຂ້ອງ ບໍ່ສາມາດຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດໄດ້, ວິສາຫະກິດດັ່ງກ່າວ ຕ້ອງເຂົ້າມາອະທິບາຍເຫດຜົນຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ອອກທະບຽນວິສາຫະກິດໃຫ້ພາຍໃນກຳນົດ ສິບວັນລັດຖະການ. ກໍລະນີບໍ່ເຂົ້າມາອະທິບາຍ ຫລືເຂົ້າມາອະທິບາຍ ແຕ່ບໍ່ມີເຫດຜົນພຽງພໍ, ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ລົບລ້າງໃບທະບຽນວິສາຫະກິດທີ່ອອກໃຫ້ ຕາມທີ່ບົ່ງໄວ້ໃນມາດຕາ 22 ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013.

ສຳລັບການຂໍແຈ້ງຂຶ້ນທະບຽນວິສາຫະກິດໃໝ່ ພາຍຫລັງຖືກລົບລ້າງ, ສາມາດປະຕິບັດໄດ້ ຕາມຂັ້ນຕອນຫລືລະບຽບການ ດັ່ງທີ່ກ່າວມາໃນຄຳແນະນຳສະບັບນີ້.

**2. ເອກະສານທະບຽນວິສາຫະກິດ ທີ່ປະກອບໃນສຳນວນຄຳຮ້ອງຂໍອະນຸຍາດລົງທຶນ ຫລືຂໍອະນຸຍາດດຳເນີນທຸລະກິດ**

ພາຍຫລັງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ)ແລ້ວ ວິສາຫະກິດທີ່ກ່ຽວຂ້ອງ ສາມາດນຳເອົາໃບທະບຽນວິສາຫະກິດ ແລະໜັງສືແຈ້ງວັດຖຸປະສົງ ທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ປະທັບຕາຮັບຮອງ (ສະບັບກາແດງ)ໄປຍື່ນຂໍອະນຸຍາດລົງທຶນຫລືອະນຸຍາດດຳເນີນທຸລະກິດ ນຳຂະແໜງການກ່ຽວຂ້ອງ ຕາມລະບຽບການ.

ສຳລັບສຳນວນຄຳຮ້ອງ ທີ່ຕິດພັນກັບແຕ່ລະກິດຈະການ ແມ່ນໃຫ້ຂະແໜງການກ່ຽວຂ້ອງ ເປັນຜູ້ແນະນຳລະອຽດກ່ຽວກັບແບບຟອມ, ເນື້ອໃນ ແລະຂັ້ນຕອນໃນການປະກອບເອກະສານຄຳຮ້ອງໃຫ້ແກ່ວິສາຫະກິດທີ່ກ່ຽວຂ້ອງ.



Scanned with CamScanner

ວິສາຫະກິດໃດ ຫາກຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຫລືຂໍອະນຸຍາດດຳເນີນທຸລະກິດ ໂດຍບໍ່ມີເອກະສານຄົບຖ້ວນ ຕາມທີ່ກ່າວມາໃນຂໍ້ນີ້ ແມ່ນບໍ່ຖືກຕ້ອງ ແລະໃຫ້ຂະແໜງການກ່ຽວຂ້ອງ ປະຕິເສດການຮັບພິຈາລະນາຄຳຮ້ອງດັ່ງກ່າວ ເວັ້ນເສັຍແຕ່ວິສາຫະກິດ (ສ່ວນບຸກຄົນ ຫລືນິຕິບຸກຄົນ) ທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງມາແລ້ວ ຕາມທີ່ກ່າວມາໃນວັກ 3 ຂໍ້ 2 (ຂ) ຂອງຄຳແນະນຳສະບັບນີ້.

**3. ບ່ອນຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຫລືອະນຸຍາດດຳເນີນທຸລະກິດ ພາຍຫລັງຂຶ້ນທະບຽນວິສາຫະກິດ**

ການຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດ ຕ້ອງປະຕິບັດ ດັ່ງນີ້:

- ກິດຈະການທີ່ນອນໃນບັນຊີຄວບຄຸມ ໃຫ້ຍື່ນຂໍອະນຸຍາດລົງທຶນ ຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ຢູ່ຂະແໜງແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກຳນົດໄວ້ໃນບັນຊີກິດຈະການຄວບຄຸມ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ - 2016;
- ກິດຈະການທີ່ຢູ່ນອກບັນຊີຄວບຄຸມ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກ່ຽວຂ້ອງ ຕາມເງື່ອນໄຂ ແລະ ຂັ້ນຕອນ ທີ່ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

**4. ເນື້ອໃນໃບອະນຸຍາດລົງທຶນ ແລະໃບອະນຸຍາດດຳເນີນທຸລະກິດ**

ເນື້ອໃນ ຮູບແບບໃບອະນຸຍາດລົງທຶນ ແມ່ນໃຫ້ປະຕິບັດຕາມ ລະບຽບການຂອງຂະແໜງການແຜນການ ແລະ ການລົງທຶນ. ສ່ວນເນື້ອໃນ ແລະຮູບແບບໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການກ່ຽວຂ້ອງ ແຕ່ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່ຂະແໜງການ ທີ່ອອກໃບອະນຸຍາດດຳເນີນທຸລະກິດ;
- ຊື່ວິສາຫະກິດທີ່ໄດ້ຮັບອະນຸຍາດ (ເປັນພາສາລາວ ແລະ ເປັນພາສາຕ່າງປະເທດ);
- ເລກລະຫັດວິສາຫະກິດ.........................................................................;
- ເລກປະຈຳຕົວຜູ້ເສັຍອາກອນ........................................................ (ຖ້າມີ);
- ທີ່ຕັ້ງສຳນັກງານ:...............................................................................;
- ລາຍຊື່ກິດຈະການທີ່ອະນຸຍາດໃຫ້ດຳເນີນທຸລະກິດ;
- ອາຍຸນຳໃຊ້ຂອງໃບອະນຸຍາດລົງທຶນ ຫລືໃບອະນຸຍາດດຳເນີນທຸລະກິດ (ຖ້າມີ).

**5. ກຳນົດເວລາໃນການພິຈາລະນາອອກໃບອະນຸຍາດລົງທຶນ ຫລືໃບອະນຸຍາດດຳເນີນທຸລະກິດ**

ກຳນົດເວລາໃນການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ປະຕິບັດ ດັ່ງນີ້:

- ກິດຈະການ ທີ່ບໍ່ມີເງື່ອນໄຂ ສຳລັບການພິຈາລະນາກ່ອນ ອອກໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ໂດຍໄວ ຫລື ຊ້າສຸດ ບໍ່ໃຫ້ເກີນ ສາມວັນລັດຖະການ ນັບແຕ່ວັນ ທີ່ໄດ້ຮັບສຳນວນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ;
- ກິດຈະການ ທີ່ມີເງື່ອນໄຂ ສຳລັບການພິຈາລະນາ ກ່ອນອອກໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ຂະແໜງການກ່ຽວຂ້ອງ ອອກໃບອະນຸຍາດ ຢ່າງຊ້າບໍ່ໃຫ້ເກີນ 10 ວັນລັດຖະການ ຕາມບົດບັນຍັດວັກສອງ ມາດຕາ 17(ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ - 2013, ເວັ້ນເສັຍແຕ່ຂະແໜງການກ່ຽວຂ້ອງ ມີລະບຽບການ ກຳນົດເວລາໃນການພິຈາລະນາ ເປັນຢ່າງອື່ນ.



Scanned with CamScanner

ຂໍຄວາມຮ່ວມມື ຈາກຂະແໜງການກ່ຽວຂ້ອງ ຄົ້ນຄວ້າປະກາດໃຊ້ນິຕິກຳລະອຽດ (ກ່ຽວກັບຂັ້ນຕອນການຂໍອະນຸຍາດ, ກຳນົດເວລາໃນການພິຈາລະນາ, ແບບຟອມ, ຄ່າໃຊ້ຈ່າຍຕ່າງໆ) ໃນກິດຈະການ ທີ່ມີເງື່ອນໄຂສຳລັບການພິຈາລະນາ ກ່ອນອອກໃບອະນຸຍາດດຳເນີນທຸລະກິດ ແລະ ກິດຈະການ ທີ່ມີເງື່ອນໄຂດັ່ງກ່າວ ຕ້ອງແມ່ນກິດຈະການທີ່ມີຄວາມຈຳເປັນ ຕາມທີ່ບົ່ງໃນຂໍ້ 2 ມາດຕາ 3(ປັບປຸງ) ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ-2013.

ສຳລັບກຳນົດເວລາໃນການພິຈາລະນາອອກໃບອະນຸຍາດລົງທຶນ ໃນບັນຊີຄວບຄຸມ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບປັບປຸງ-2016.

**6. ການນຳສົ່ງເອກະສານ ກ່ຽວຂ້ອງກັບໃບອະນຸຍາດ**

ພາຍໃນກຳນົດ 5 ວັນລັດຖະການ ນັບແຕ່ວັນທີ່ໄດ້ເຊັນເອກະສານເປັນຕົ້ນໄປ ໃຫ້ຂະແໜງການກ່ຽວຂ້ອງເຮັດສະໂນດນຳສົ່ງ (ສະບັບກາແດງ) ໜຶ່ງສະບັບ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ອອກໃບທະບຽນວິສາຫະກິດໃຫ້ ເພື່ອເກັບມ້ຽນ ແລະ ປ້ອນຂໍ້ມູນເຂົ້າຖານຂໍ້ມູນວິສາຫະກິດ. ເອກະສານດັ່ງກ່າວ ປະກອບດ້ວຍ:

- ໃບອະນຸຍາດລົງທຶນ ຫລືໃບອະນຸຍາດດຳເນີນທຸລະກິດ;
- ຄຳສັ່ງ, ແຈ້ງການ ຫລືຂໍ້ຕົກລົງກ່ຽວກັບການຖອນ, ການໂຈະ ຫລື ການຍົກເລີກ (ຊົ່ວຄາວ ຫລືຖາວອນ) ຕໍ່ການອະນຸຍາດລົງທຶນ ຫລືການອະນຸຍາດດຳເນີນທຸລະກິດ.

**7. ການປ່ຽນແປງເນື້ອໃນທະບຽນວິສາຫະກິດຕິດພັນກັບການປ່ຽນແປງເນື້ອໃນໃບອະນຸຍາດ**

ທຸກຄັ້ງທີ່ວິສາຫະກິດປ່ຽນແປງເນື້ອໃນທະບຽນວິສາຫະກິດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເຮັດໜັງສືຢັ້ງຢືນການປ່ຽນແປງເນື້ອໃນດັ່ງກ່າວ ມອບໃຫ້ວິສາຫະກິດ ເພື່ອສະເໜີປ່ຽນແປງເນື້ອໃນໃບອະນຸຍາດລົງທຶນ ຫລືໃບອະນຸຍາດດຳເນີນທຸລະກິດ ໃຫ້ສອດຄ່ອງ, ຖ້າມີ (ແບບຟອມໃບຢັ້ງຢືນການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຄັດຕິດມາພ້ອມນີ້).

**໑. ການຄຸ້ມຄອງວິສາຫະກິດ**

1. ພາຍຫລັງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫລື ນິຕິບຸກຄົນ) ແລ້ວ, ຂະແໜງທະບຽນ ແລະຄຸ້ມຄອງວິສາຫະກິດ ຕ້ອງເປັນເຈົ້າການ ຄຸ້ມຄອງການຈັດຕັ້ງທຸລະກິດ (ການປ່ຽນແປງເນື້ອໃນທະບຽນວິສາຫະກິດ) ຕາມບົດບັນຍັດມາດຕາ 23 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ຢ່າງເຂັ້ມງວດ.

2. ສຳລັບຂະແໜງການກ່ຽວຂ້ອງ ທີ່ອອກໃບອະນຸຍາດລົງທຶນ ຫລືໃບອະນຸຍາດດຳເນີນທຸລະກິດໃຫ້ແກ່ວິສາຫະກິດ ແມ່ນໃຫ້ເພີ່ມທະວີວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວທຸລະກິດ (ການນິຕິບຸກຄົນ) ຂອງວິສາຫະກິດ ໃນກິດຈະການທີ່ຕົນອະນຸຍາດ ຕາມລະບຽບການ ແລະ ຕາມຂອບເຂດສິດ, ໜ້າທີ່ ທີ່ໄດ້ບົ່ງໄວ້ໃນມາດຕາ 206 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013.

ໃນກໍລະນີມີການລະເມີດ ແມ່ນໃຫ້ຂະແໜງການກ່ຽວຂ້ອງເປັນເຈົ້າການປະສານງານ ເພື່ອປະຕິບັດມາດຕະການຢ່າງເຂັ້ມງວດ ຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີ ຫາກມີການນຳໃຊ້ມາດຕະການ ຕາມທີ່ບົ່ງໄວ້ໃນຂີດຫຍໍ້ໜ້າ 2, ຂໍ້ 6 (ຄ) ໃຫ້ແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດ ເພື່ອສັ່ງໂຈະການເຄື່ອນໄຫວທຸລະກິດ (ຊົ່ວຄາວ ຫລືຖາວອນ) ຕາມບົດບັນຍັດ ຂໍ້ 6 ມາດຕາ 206(ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ-2013.



Scanned with CamScanner

ຈ. ການຈັດຕັ້ງປະຕິບັດຄຳແນະນຳ

1. ເພື່ອໃຫ້ການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຄຳສັ່ງຂອງນາຍົກ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ສປປ ລາວ ແລະ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນຕາມເປົ້າໝາຍ ແລະລະດັບຄາດໝາຍທີ່ວາງໄວ້, ຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ຄວາມຮ່ວມມື ປະສານງານກັນຢ່າງໃກ້ຊິດ ແລະ ປະຕິບັດສອດຄ່ອງ ໄປໃນທິດທາງດຽວກັນ.

2. ຂໍຄວາມຮ່ວມມື ຈາກຂະແໜງການກ່ຽວຂ້ອງ ຈົ່ງກະກຽມເງື່ອນໄຂ ແລະ ຄວາມພ້ອມໃນການພິຈາລະນາອອກໃບອະນຸຍາດລົງທຶນ ຫລືໃບອະນຸຍາດດຳເນີນທຸລະກິດ ທີ່ສະດວກ, ວ່ອງໄວ ແລະ ເອື້ອອຳນວຍຢ່າງເຕັມສ່ວນແກ່ວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ແລ້ວ.

3. ໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເປັນເຈົ້າການ:

- ປະສານງານກັບບັນດາພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນປຶກສາຫາລື ແລະແກ້ໄຂບັນຫາຕ່າງໆ (ຖ້າມີ) ຕາມທີ່ບົ່ງໄວ້ໃນຂໍ້ 1.2.1 ຂອງຄຳສັ່ງນາຍົກ, ສະບັບເລກທີ 02/ນຍ ເພື່ອລາຍງານສະເໜີຂັ້ນເທິງ;
- ເຜີຍແຜ່ ແລະ ແນະນຳຂັ້ນຕອນກ່ອນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງ ຈັດຕັ້ງປະຕິບັດເປັນລວງດຽວກັນ;

4. ໃນການຈັດຕັ້ງປະຕິບັດ (ສຳລັບວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ ຜ່ານມາຈົນເຖິງວັນທີ່ຄຳແນະນຳສະບັບນີ້ປະກາດໃຊ້) ແມ່ນສາມາດສືບຕໍ່ເຄື່ອນໄຫວທຸລະກິດ ຕາມກິດຈະການທີ່ໄດ້ບົ່ງໄວ້ໃນໃບທະບຽນວິສາຫະກິດ ເວັ້ນເສັຍແຕ່ກໍລະນີຂໍປ່ຽນແປງເນື້ອໃນທະບຽນວິສາຫະກິດ ແມ່ນໃຫ້ປະຕິບັດຕາມຄຳແນະນຳສະບັບນີ້;

ວິສາຫະກິດທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດແລ້ວ ແຕ່ມີຈຸດປະສົງຢາກ ປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນ ຂອງຄຳແນະນຳສະບັບນີ້ ກໍສາມາດປະຕິບັດໄດ້.

5. ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ແມ່ນໃຫ້ເລີ່ມນັບແຕ່ວັນທີ 1 ກໍລະກົດ 2018 ເປັນຕົ້ນໄປ ໂດຍຕ້ອງລົງໃນຈົດໝາຍເຫດທາງລັດຖະການ ກ່ອນກຳນົດເວລາຈັດຕັ້ງປະຕິບັດດັ່ງກ່າວ.

ລັດຖະມົນຕີ

ກະຊວງອຸດສາຫະກຳແລະການຄ້າ
ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ບັນດາຂະແໜງການກ່ຽວຂ້ອງ;
- ຫ້ອງວ່າການປົກຄອງແຂວງ, ນະຄອນຫລວງ;
- ສະພາການຄ້າ ແລະອຸດສາຫະກຳ;
- ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫລວງ.



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

# ໜັງສືແຈ້ງວັດຖຸປະສົງ

## ກ່ຽວກັບກິດຈະການ ຂໍອະນຸຍາດລົງທຶນ ຫລືຂໍອະນຸຍາດດຳເນີນທຸລະກິດ

ກິດຈະການ ທີ່ມີຈຸດປະສົງຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດຳເນີນທຸລະກິດ ຄັດຕິດກັບຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ, ສະບັບລົງວັນທີ ..........ມີ ດັ່ງນີ້:

ກິດຈະການທີ 1 – ..................................................................................

ກິດຈະການທີ 2 – ..................................................................................

ກິດຈະການທີ 3 – ..................................................................................

.......................

ແຈ້ງໄວ້ເພື່ອເປັນພື້ນຖານ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ປະທັບຕາຮັບຮອງ ແລະປະກອບໃນສຳນວນຄຳຮ້ອງຍື່ນຂໍອະນຸຍາດລົງທຶນ ຫລື ຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກ່ຽວຂ້ອງ ຕາມລະບຽບກົດໝາຍ.

(ວັກນີ້ ໃຊ້ສຳລັບເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອປ້ອນຂໍ້ມູນໃສ່) - ໜັງສືຮັບຮອງ ສະບັບນີ້ ໃຊ້ເພື່ອຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຫລືຂໍອະນຸຍາດດຳເນີນທຸລະກິດ ຕິດພັນກັບໃບທະບຽນວິສາຫະກິດ, ສະບັບເລກທີ /, ລົງວັນທີ........ເທົ່ານັ້ນ (ໃບທະບຽນວິສາຫະກິດ ສະບັບດັ່ງກ່າວຄັດຕິດມາພ້ອມນີ້).

**ທີ່..............., ລົງວັນທີ...........**

**ລາຍເຊັນ:**

- ເຈົ້າຂອງວິສາຫະກິດ ☐ ຫລື ຜູ້ຮັບມອບໝາຍ ☐ (ສຳລັບວິສາຫະກິດສ່ວນບຸກຄົນ)....................
- ຂາຮຸ້ນ (ທີ່ໄດ້ຮັບມອບໝາຍ☐ ຫລືຜູ້ຮັບມອບໝາຍ ☐ - ສຳລັບວິສາຫະກິດຮຸ້ນສ່ວນ)................
- ຜູ້ຖືຮຸ້ນ ☐ ຫລື ຜູ້ຮັບມອບໝາຍ ☐ (ສຳລັບຮູບແບບບໍລິສັດຈຳກັດຜູ້ດຽວ)................................
- ຜູ້ອຳນວຍການ (ທີ່ໄດ້ຮັບມອບໝາຍ☐ ຫລືຜູ້ຮັບມອບໝາຍ - ສຳລັບບໍລິສັດຈຳກັດ, ມະຫາຊົນ, ລັດວິສາຫະກິດ)...........

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຂະແໜງການອຸດສາຫະກຳ ແລະ ການຄ້າ

ພາກສ່ວນທະບຽນແລະຄຸ້ມຄອງວິສາຫະກິດ ເລກທີ /........

ທີ່............................., ວັນທີ

# ໜັງສືຢັ້ງຢືນ

## ການປ່ຽນແປງເນື້ອໃນທະບຽນວິສາຫະກິດ

ເພື່ອເປັນເອກະສານຫລັກຖານ ໃຫ້ວິສາຫະກິດໃນການຍື່ນປ່ຽນແປງເນື້ອໃນໃບອະນຸຍາດໃຫ້ສອດຄ່ອງກັບ ການປ່ຽນແປງເນື້ອໃນທະບຽນວິສາຫະກິດ, (ຊື່: ຂະແໜງທະບຽນ ແລະຄຸ້ມຄອງວິສາຫະກິດ) ອອກໜັງສືສະບັບນີ້ ເພື່ອຢັ້ງຢືນວ່າ:

ວິສາຫະກິດ (ຊື່): .... , ໃບທະບຽນວິສາຫະກິດ, ເລກທີ /ຈທວ, ລົງວັນທີ........ ເປັນປະເພດວິສາຫະກິດ:...............ຮູບການ ຫລື ຮູບແບບວິສາຫະກິດ:..........., ໄດ້ຮັບການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຄັ້ງວັນທີ......... ດັ່ງນີ້:

1. ...............
2. ...............
3. .....

ໃຫ້ຂະແໜງການກ່ຽວຂ້ອງປັບປຸງເນື້ອໃນໃບອະນຸຍາດ ໃຫ້ສອດຄ່ອງກັບການປ່ຽນແປງເນື້ອໃນທະບຽນວິສາຫະກິດດັ່ງກ່າວ ເພື່ອເປັນພື້ນຖານໃນການເຄື່ອນໄຫວທຸລະກິດຂອງວິສາຫະກິດທີ່ກ່ຽວຂ້ອງ (ຖ້າມີ).

ຫວັງຢ່າງຍິ່ງວ່າ: ຂະແໜງການທີ່ກ່ຽວຂ້ອງ ຈະໃຫ້ຄວາມສະດວກແລະພິຈາລະນາ ຕາມທາງຄວນດ້ວຍ.

**ຫົວໜ້າອົງກອນ**

**ໝາຍເຫດ:**



Scanned with CamScanner